ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ ເລກທີ: 0991 /ຫອຄ

ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2023

# ແຈ້ງການ

**ເຖິງ : - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ**
**- ຫ້ອງການ ອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ;**
**- ບຸກຄົນ, ນິຕິບຸກຄົນ ທີ່ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ.**
**ເລື່ອງ : ການແຈ້ງ, ຢັ້ງຢືນຮັບຮູ້ ແລະ ອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ.**

- ອີງຕາມ ດຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0634/ອຄ.ກຈພງ, ລົງວັນທີ 01 ກໍລະກົດ 2020;
- ອີງຕາມ ຄຳແນະນຳ ກ່ຽວກັບການແຈ້ງການຢັ້ງຢືນຮັບຮູ້ ແລະ ການຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ສະບັບເລກທີ 0479/ອຄ, ລົງວັນທີ 05 ເມສາ 2023.

ເພື່ອເປັນການຈັດຕັ້ງປະຕິບັດ ດຳລັດວ່າດ້ວຍການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021 ແລະ ຄຳແນະນຳ ກ່ຽວກັບການແຈ້ງ, ການຢັ້ງຢືນຮັບຮູ້ ແລະ ການຂໍອະນຸຍາດການດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ສະບັບເລກທີ 0479/ອຄ, ລົງວັນທີ 05 ເມສາ 2023 ໃຫ້ມີປະສິດທິພາບ.

## ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ດັ່ງນີ້:

**1.** ບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໃຫ້ປະກອບເອກະສານສະເໜີຕໍ່ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຂໍການຢັ້ງຢືນຮັບຮູ້ ຫຼື ຂໍໃບອະນຸຍາດດຳເນີນທຸລະກິດການຄ້າທາງເລັກໂຕຣນິກ ຕາມທີ່ໄດ້ກຳນົດໄວ້ໃນຄຳແນະນຳ ສະບັບເລກທີ 0479/ອຄ, ລົງວັນທີ 05 ເມສາ 2023;

**2.** ສຳລັບ ບຸກຄົນ, ນິຕິບຸກຄົນ ທີ່ດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ກ່ອນແຈ້ງການສະບັບນີ້ ແມ່ນໃຫ້ຮີບຮ້ອນປະກອບເອກະສານສະເໜີຕໍ່ກົມການຄ້າພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຂໍການຢັ້ງຢືນຮັບຮູ້ ແລະ ຂໍອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກຕາມລະບຽບການ ໃຫ້ສຳເລັດພາຍໃນ 90 ວັນ ນັບຕັ້ງແຕ່ມື້ອອກແຈ້ງການສະບັບນີ້ ເປັນຕົ້ນໄປ.

3. ການຕໍ່ອາຍຸ, ການດັດແກ້ເນື້ອໃນ, ການຍົກເລີກ ຫຼື ລົບລ້າງ ໃບຢັ້ງຢືນຮັບຮູ້ ຫຼື ໃບອະນຸຍາດດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ແມ່ນໃຫ້ປະຕິບັດຕາມຄຳແນະນຳ ສະບັບເລກທີ 0479/ອຄ, ລົງວັນທີ 05 ເມສາ 2023;

4. ມອບໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ພາຍຫຼັງອອກໃບທະບຽນວິສາຫະກິດແລ້ວ ໃຫ້ອອກໜັງສືແນະນຳ ແກ່ວິສາຫະກິດທີ່ມີຈຸດປະສົງດຳເນີນທຸລະກິດການຄ້າທາງເອເລັກໂຕຣນິກ ໃນຮູບແບບການໃຫ້ການບໍລິການຕະຫຼາດທາງເອເລັກໂຕຣນິກ ໃຫ້ໄປພົວພັນກັບ ກົມການຄ້າພາຍໃນ ເພື່ອຂໍອະນຸຍາດດຳເນີນທຸລະກິດຕາມລະບຽບການ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດຕາມເນື້ອໃນຂອງແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຮຕ. ຮັກສາການແທນຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ນ.ສົມາລາ ແກ້ວສະກຸນວົງ